# ເງື່ອນໄຂ ແລະ ຂັ້ນຕອນການປະມູນ ລົດໃຫຍ່

ອົງການພັດທະນາຂອງປະເທດເນເທີແລນ ປະຈຳສປປ ລາວ ມີຄວາມຕ້ອງການຂາຍລົດໃຫຍ່ **1** ຄັນ ຊຶ່ງມີຂໍ້ກຳນົດ ແລະ ເງື່ອນດັ່ງລຸ່ມນີ້.

**1.** ລົດທີ່ຈະປະມູນອອກແມ່ນຢູ່ໃນສະພາຍເກົ່າທີ່ນຳໃຊ້ແລ້ວ, ຄຸນນະພາບອາດບໍ່ສົມບູນ ເປັນການປະມູນອອກຕາມສະພາບ, ບໍ່ໄດ້ ປົກປິດຂໍ້ມູນກ່ຽວກັບຊັບສິນ ຫຼື ສະພາບລົດແຕ່ຢ່າງໃດ, ຂໍ້ມູນບາງອັນບໍ່ສາມາດກວດສອບໄດ້.

**2.** ຜູ້ປະມູນມີສິດແລະໜ້າທີ່ກວດສອບລາຍລະອຽດກ່ຽວກັບລົດ, ເງື່ອນໄຂ ແລະ ຄຸນສົມບັດຕ່າງ ໆ ຂອງລົດກ່ອນເຂົ້າຮ່ວມ ຫຼື ຍື່ນຊອງປະມູນ, ໂດຍການ ເບິ່ງຕາມຮູບພາບທີ່ຕິດຄັດ, ເຂົ້າເບິ່ງຮູບດ້ານລຸ່ມ ຫຼື ເບິ່ງຕົວຈິງທີ່ຕ້ອງການ ນັບແຕ່ມື້ປະກາດຈົນເຖິງມື້ປິດຊອງປະມູນທີ່ລະບຸໄວ້. ອົງການ ຂໍສະຫງວນສິດ ບໍ່ຮັບຜິດຊອບໃດ ໆ ໃນຂໍ້ຜິດພາດທີ່ເກີດຂຶ້ນ ພາຍຫຼັງປະມູນ ໂດຍຖືວ່າຮັບຊາບ ແລະ ຍອມຮັບເຖິງສະພາບຂອງລາຍການລົດນັ້ນແລ້ວ, ທາງອົງການ ບໍ່ຮັບປ່ຽນ ຫຼື ຮັບຄືນໃນທຸກກໍລະນີ

**3.** ລົດທີ່ນຳອອກປະມູນແມ່ນ ລົດນຳເຂົ້າໂດຍຍົກເວັ້ນພາສີ ອາກອນ ຈຳນວນ **1** ຄັນ. ຜູ້ຊະນະການປະມູນ ຕ້ອງໄດ້ຍິນຍອມເສຍພາສີອາກອນຕາມລະບຽບກົດໝາຍ (ສຳລັບລົດທີ່ຍົກເວັ້ນນາສີອາກອນ), ສ່ວນການດຳເນີນການຂໍປ່ຽນກຳມະສິດທາງອົງການຈະເປັນຜູ້ສົ່ງໜັງສືສະເໜີທີ່ປ່ຽນກຳມະສິດໃຫ້ ໂດຍການຍື່ນໜັງສືສະເໜີຫາກະຊວງທີ່ກ່ຽວຂ້ອງ ຈົນໄດ້ຮັບສະໂໜນດນຳສົ່ງທີ່ອອກຊື່ຜູ້ຊະນະ, ກ່ອນທີ່ຜູ້ຊະນະປະມູນ ຈະເປັນຜູ້ນຳເອົາສະໂນດນຳສົ່ງດັ່ງກ່າວ ໄປສະເໜີຂໍຂຶ້ນປ້າຍ ແລະ ເສຍພາສີ ອາກອນເອງຕາມຂັ້ນຕອນ.

**4.** ຜູ້ທີ່ຊະນະການປະມູນ ຕ້ອງຊຳລະເງິນ ຈຳນວນ **100%** ຂອງມູນຄ່າປະມູນໄດ້ ເຂົ້າບັນຊີຂອງອົງການ ພາຍໃນ **5** ວັນລັດຖະການ.

**5.** ອົງການຈະເຮັດໃບຊື້-ຂາຍ ຕາມລະບຽບການ ກັບຜູ້ຊະນະການປະມູນ ແລະ ປົດປ້າຍ ຂຕ ອອກ, ຫຼັງຈາກນັ້ນ ຜູ້ຊະນະສາມາດນຳລົດອອກໄດ້ເລີຍ.

**6.** ພາຫະນະຄັນດັ່ງກ່າວ ປັດຈຸບັນແມ່ນຢູ່ ຫ້ອງການນະຄອນຫຼວງວຽງຈັນ ທ່ານສາມາດ ເຂົ້າມາເບິ່ງສະພາບລົດໄດ້ ໃນເວລາ 9:00 ໂມງ-11:00 ໂມງ, ພາກບ່າຍ 14:00 ໂມງ-16:00 ໂມງ ໂມງລັດຖະການ ນັບຕັ້ງແຕ່ມື້ນຈື່ງປະມູນເປັນຕົ້ນໄປ.

**7**. ຜູ້ເຂົ້າປະມູນຕ້ອງໄດ້ສຶກສາເງື່ອນໄຂການປະມູນ, ການຊຳລະເງິນ, ການເຄື່ອນຍ້າຍ, ການຂື້ນກະບຽນໃໝ່ ຍອມຮັບແລະຍິນຍອມປະຕິບັດຕາມ ພາຍໃຕ້ເງື່ອນໄຂ ການປະກາດຂອງອົງການ ແລະ ກົດໝາຍຂອງ ສປປ ລາວ.

**8.** ຜູ້ທີ່ສົນໃຈຍືນຊອງປະມູນຕ້ອງໄດ້ ສະເໜີລາຄາເປັນ ສະກຸນເງິນໂດລາສະຫະລັດເທົ່ານັ້ນ ແລະ ສາມາດຈ່າຍເປັນເງິນໂດລາ ຫຼື ຈ່າຍເປັນເງິນກີບ ຕາມອັດຕາແລກປ່ຽນຂອງທະນາຄານການຄ້າພາຍໃນມື້ນັ້ນ.

**9.** ການປະມູນຈະເລີ່ມຈາກລາຄາຂັ້ນຕ່ຳທີ່ ອົງການຕັ້ງໄດ້ແລ້ວ (ຕາມຟອມປະມູນ).

**10**. ຜູ້ປະມູນທີ່ໃຫ້ລາຄາສູງສຸດຄືຜູ້ຊະນະ, ໃນກໍລະນີທີ່ຜູ້ປະມູນຍື່ນ ແລະ ຊະນະໃນມູນຄ່າດຽວກັນ ຄະນະກຳມະການມີສິດພິຈາລະນາເປັນລາຍການດັ່ງນີ້: 1. ໂທຫາທັງສອງຝ່າຍເພື່ອໃສ່ລາຄາໃໝ ຜູ້ທີ່ໃສ່ລາຄາສູງກ່ອນໝູ່ແມ່ນຜູ້ຊະນະ.

**11.** ຜູ້ຍື່ນຊອງປະມູນ ຕ້ອງໄດ້ເຊັນແບບຟອມນີ້ ແລ້ວໃສຊອງປິດລັບກ່ອນຍື່ນຊອງ ໃນກໍລະນີທີ່ບໍ່ມີລາຍເຊັນ, ຊື່, ເບີໂທ ແລະ ເລກບັດ ປະຈຳໂຕ ຈະຖືວ່າເປັນໂມຄະ.

**12.** ອົງການໄດ້ເປີດກວ້າງໃຫ້ທຸກຄົນເຂົ້າຮ່ວມການປະມູນ ທັງພາຍໃນອົງການ ແລະ ພາຍນອກ ໃນຂອບເຂດທົ່ວປະເທດທີ່ສົນໃຈ.

## ຂັ້ນຕອນການປະມູນ:

**1.** ຜູ້ທີ່ສົນໃຈເຂົ້າປະມູນ ສາມາດລົງທະບຽນ ແລະ ຮັບຟອມການປະມູນໄດ້ທີ່ ຫ້ອງການຂອງອົງການ ໂດຍບໍ່ເສຍຄ່າໃດ ໆ .

**2.** ເນື່ອງຈາກວ່າ ບັນດາລາຍການ ທີ່ປະມູນ ແມ່ນຈະໄດ້ໂອນມາເປັນຊື່ຂອງຜູ້ຊະນະການປະມູນ. ຜູ້ທີ່ຍື່ນ/ຊະນະການປະມູນ ຕ້ອງລະບຸລາຍລະອຽດຂອງຕົນເອງໃນແບບຟອມໃຫ້ຈະແຈ້ງ, ລະບູເລກບັດປະຈຳໂຕໃຫ້ລະອຽດ, ພ້ອມທັງຕິດຄັດສຳເນົາບັດປະຈຳໂຕມາພ້ອມ.

**3**. ແບບຟອມການປະມູນ ແລະ ເງື່ອນໄຂ, ຂັ້ນຕອນປະມູນນີ້ ຫຼັງຈາກເຊັນແລ້ວ ແມ່ນໃຫ້ໃສ່ຊອງປິດສະນິດ ແລ້ວໃຫ້ມາສົ່ງ ໄດ້ທີ່ຫ້ອງການນະຄອນຫຼວງ ໃນໂມງລັດຖະການ 8:00-16:30 ແລງ ແລະ ສາມາດຍື່ນຊອງໄດ້ແຕ່ມື້ປະກາດ ຈົນເຖິງວັນທີ 26 ກັນຍາ 2024.

**4.** ຄະນະກຳມະການຈະໄດ້ເປີດຊອງປະມູນ ໃນວັນທີ 27 ກັນຍາ 2024 ໂດຍຊ່ອງໜ້າຄະນະກຳມະ ການຂອງອົງການ

**5**. ຜູ້ທີ່ຊະນະການປະມູນ ຈະຖືກຕິດຕໍ່ຫາພາຍໃນ 3 ວັນ ລັດຖະການຫຼັງຈາກເປີດຊອງປະມູນແລ້ວ ແລະ ຜູ້ທີ່ບໍ່ຊະນະສາມາດໂທສອບ ຖາມໄດ້ເຊັ່ນດຽວກັນ.

ຂ້າພະເຈົ້າ ເຫັນດີຕາມບັນດາຂໍ້ກຳນົດ ຂໍເງື່ອນໄຂຂ້າງເທິງນີ້ ແລະ ເຫັນດີປະຕິບັດຕາມຂັ້ນຕອນ ຖ້າຂ້າພະເຈົ້າເປັນຜູ້ຊະນະການປະມູນ.

| No<br>ລດ | Photo<br>ຮູບ | Description<br>ລາຍລະອຽດລົດ | Minimum price<br>ລາຄາເລີ່ມຕົ້ນ | Min. Bid increment<br>ມູນຄ່າຕ່ຳສຸດທີ່ເພີ່ມ | Bidding price<br>ລາຄາປະມູນ |
|---|---|---|---|---|---|
| 1 |   | TOYOTA LANECRUISER PRADO<br><br>White 2005, engine: 3000CC diesel,<br><br>OD 362428km as of 18 September 2024<br><br>Transmission type: MT<br><br>Plate number: IT 403<br><br>Imported and registered as duty-free | $ 5 000 | $ 100 | |

| Name & Surname<br>ຊື່ ແລະນາມສະກຸນ | Tel<br>ໂທ | Email<br>ອີເມວ | ID No<br>ເລກບັດ | Signature<br>ລາຍເຊັນ |
|---|---|---|---|---|
| | | | | |

ສອບຖາມລາຍລະອຽດ ແລະ ຮັບຊ່ອງປະມູນໄດ້ທີ່:
ອົງການພັດທະນາ ປະເທດເນີເທີແລນ ປະຈຳລາວ
ບ້ານ ສະພານທອງໃຕ້, ເມືອງ ສີສັກຕະນາກ, ນະຄອນຫຼວງວຽງຈັນ
Email: laprocurement@snv.org, Tel: 020 52371671